ໂຮມເລື່ອງສັ້ນ

ພັດທະນາຊົນນະບົດຮອບດ້ານ ເພື່ອລຶບລ້າງຄວາມທຸກຍາກຂອງປະຊາຊົນ

# ເສັ້ນທາງ ສູ່ຄວາມຢູ່ດີມີສຸກ

ຈາກປາຍປາກກາຂອງນັກປະພັນ ກິດິມະສັກ



ສໍານັກພິມນັກປະພັນລາວ

ໂຮມເລື່ອງສັ້ນ
ພັດທະນາຊົນນະບົດຮອບດ້ານ ເພື່ອລຶບລ້າງຄວາມທຸກຍາກ
ຂອງປະຊາຊົນ

# ເສັ້ນທາງ
# ສູ່ຄວາມຢູ່ດີມີສຸກ

ຈາກປາຍປາກກາຂອງນັກປະພັນ ກິດີມະສັກ

ຈັດການກວດສອບ ແລະດໍາເນີນການໂດຍ
ຄະນະໂຄສະນາອົບຮົມ ສູນກາງພັກ ປະຊາຊົນປະຕິວັດລາວ
ແລະ
ຄະນະຊີ້ນໍາພັດທະນາຊົນນະບົດ
ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ
ຮ່ວມກັບ
ສະມາຄົມນັກປະພັນລາວ

ຈັດພິມໂດຍ
ສໍານັກພິມນັກປະພັນລາວ
2012

# ໂຮມເລື່ອງສັ້ນ
# ຈາກນັກປະພັນ ກິຕິມະສັກ
# ເສັ້ນທາງສູ່ຄວາມຢູ່ດີມີສຸກ

............................

ບັນນາທິການ : ຜີວລາວັນ ຫຼວງວັນນາ
ຄຳວິສັນ ແກ້ວ ສຸວັນ
ຫົງເຫີນ ຂຸນພິທັກ
ຕີພິມ : ສົມພອນ ທຸມມາວົງ
ໄພວັນ ທຸມມາວົງ
ອອກແບບ-ຈັດໜ້າ : ນິວັດ (ນຸກ) ຂຸນພິທັກ
ບໍລິຫານ : ສົມພອນ ທຸມມາວົງ

**ສຳນັກພິມນັກປະພັນລາວ**
ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະທ່ອງທ່ຽວ
ໂທລະສັບ/ແຟັກ: 856-21- 219871
*Email: hong-writer@hotmail.com*
ພິມຄັ້ງແຮກ : 2012 ຈຳນວນ 2500 ເຫຼັ້ມ
**ພິມທີ່** : ໂຮງພິມ ແຫ່ງລັດ

ຂໍ້ມູນທາງບັນນານຸກົມ ຂອງຫໍສະໝຸດແຫ່ງຊາດລາວ

ນັກປະພັນລາວ
ເສັ້ນທາງສູ່ຄວາມຢູ່ດີມີສຸກ /ນັກປະພັນລາວ.--ວຽງຈັນ: ສຳນັກພິມ ນັກປະພັນລາວ, 2012.
184 ໜ້າ: ພາບປະກອບສີ 19 ຊມ (ຊຸດເພື່ອພັດທະນາຊົນນະບົດຮອບດ້ານ ແລະລຶບລ້າງຄວາມທຸກຍາກຂອງປະຊາຊົນ)
1. ໂຮມເລື່ອງສັ້ນ .I.ຜີວລາວັນ ຫຼວງວັນນາ...[ແລະຜູ້ອື່ນໆ], ບັນນາທິການ II. ຊື່ເລື່ອງ
808.84922--dc21
ISBN 978-9932-00-047-0
ທະບຽນພິມຈຳໜ່າຍ: 406 ພຈ 09102012

# ຊື່ເລື່ອງ ໜ້າ


ຄຳນຳຂອງສຳນັກພິມ 6

ຄຳເຫັນຂອງຫົວໜ້າ ຄະນະໂຄສະນາອົບຮົມ ສູນກາງພັກ 8

໑. ເສັ້ນທາງສູ່ຄວາມຢູ່ດີມີສຸກ 11

໒. ຊຸມຄຳ ຄູບຳນານ 19

໓. ມະຫາວິທະຍາໄລ ປະຊາຊົນ 30

໔. ໝາກກ້ຽງນ້ອຍ 41

໕. ຜືນນາ ລຳເຊ ແລະສາຍຝົນ 48

໖. ໜ້າທີ່ ຂອງແມ່ 58

໗. ຄົນ ກັບຄວາຍ 62

໘. ປູກຕົ້ນຟືນ 70

໙. ລົບລ້າງເຮືອນຕູບ 78

໑໐. ພະເອກໃນດວງໃຈ 88

໑໑. ເກີດອີກໃໝ່ 108

໑໒. ກັບຄືນບ້ານເກີດເມືອງນອນ ຢູ່ຊົນນະບົດ 124

໑໓. ຍັງຢູ່ກັບຖ້ຳປີວ 154

໑໔. ທາງເລືອກໃໝ່ 164

໑໕. ຝ້າຍຈັນ 176

# ຄຳນຳ
# ຂອງສຳນັກພິມນັກປະພັນລາວ

ສຳນັກພິມ ນັກປະພັນລາວ (ຂຶ້ນກັບສະມາຄົມ ນັກປະພັນລາວ)ຮູ້ສຶກເປັນກຽດ ແລະພາກພູມໃຈຫຼາຍ ທີ່ໄດ້ຮັບມອບໝາຍ ແລະຄວາມໄວ້ວາງໃຈຈາກຄະນະໂຄສະນາອົບຮົມ ສູນກາງພັກປະຊາຊົນປະຕິວັດລາວ ໃຫ້ເປັນຜູ້ດຳເນີນການຈັດພິມປື້ມບົດປະພັນວັນນະຄະດີ ທັງປະເພດເລື່ອງສັ້ນ ແລະກະວີ ຫຼື ກາບກອນ ທີ່ມີເນື້ອໃນກ່ຽວກັບ "ການພັດທະນາຊົນນະບົດຮອບດ້ານ ກັບການລຶບລ້າງຄວາມທຸກຍາກຂອງປະຊາຊົນ" ຊຶ່ງລວມມີທັງໝົດ 4 ເຫຼັ້ມດ້ວຍກັນຄື:

1. ໂຮມເລື່ອງສັ້ນ ຊຸດ: ເສັ້ນທາງສູ່ຄວາມຢູ່ດີມີສຸກ
2. ໂຮມເລື່ອງສັ້ນ ຊຸດ: ຫຼັ່ງເຫື່ອ ເພື່ອພົ້ນທຸກ
3. ໂຮມກະວີ ຊຸດ: ຕ້ານຄວາມທຸກ ປຸກໃຈພັດທະນາ
4. ໂຮມກະວີ ຊຸດ: ອະລຸນໃໝ່ ທີ່ບ້ານນາ

ໂຮມເລື່ອງສັ້ນ ຊຸດ: ຫຼັ່ງເຫື່ອ ເພື່ອພົ້ນທຸກ ມີຈຳນວນ 14 ເລື່ອງ ແລະໂຮມກະວີຊຸດ: ອະລຸນໃໝ່ ທີ່ບ້ານນາ ມີຈຳນວນ 24 ບົດ. ທັງໝົດ ເປັນບົດປະພັນດີເດັ່ນທີ່ໄດ້ຜ່ານການຕັດສິນຈາກຄະນະກຳມະການ ໃນບັ້ນກວດສອບ ແລະປະກາດຜົນການຕັດສິນເມື່ອວັນທີ 11/7/2012 ແລະເປັນຜົນງານຈາກປາຍປາກກາຂອງນັກປະພັນ ແລະນັກກະວີ ຮຸ່ນໜຸ່ມຈຳນວນ 35 ຄົນ. ສ່ວນໂຮມເລື່ອງສັ້ນຊຸດ: ເສັ້ນທາງສູ່ ຄວາມຢູ່ດີມີສຸກ ຈຳນວນ 15 ເລື່ອງ ແລະໂຮມກະວີຊຸດ: ຕ້ານຄວາມທຸກ ປຸກໃຈພັດທະນາ ຈຳນວນ 28 ບົດ ເປັນຜົນງານຂອງບັນດານັກປະພັນນັກກະວີ ກິຕິມະສັກ ຜູ້ຊຶ່ງມີບົດບາດແລະຊື່ສຽງໃນວົງການປະພັນບ້ານເຮົາຈຳນວນ 33 ຄົນ

ຄວາມທຸກຍາກນັ້ນ ບໍ່ໄດ້ໝາຍເອົາແຕ່ການຂາດເຂີນທາງດ້ານວັດຖຸ ແຕ່ຫາກໝາຍລວມເອົາທັງຄວາມຮູ້ສຶກ ນຶກຄິດ ອາລົມຈິດຂອງຜູ້ຄົນອີກດ້ວຍ ດັ່ງນັ້ນ ການພັດທະນາ ຊົນນະບົດ ຈຶ່ງຈຳເປັນຕ້ອງດຳເນີນໄປຄຽງຄູ່ກັນ ທັງທາງດ້ານວັດຖຸ ແລະຈິດໃຈ.

ບັນດາບົດເລື່ອງສັ້ນ ແລະບົດກະວີ ທັງໝົດເຫຼົ່ານີ້ ປຽບເໝືອນເປັນຕົວແທນຂອງບັນດານັກປະພັນ ນັກກະວີ ລາວເຮົາທັງຫຼາຍໃນທົ່ວປະເທດ ທີ່ຍໍຍື່ນຜົນງານມາ ໂດຍຫວັງວ່າມັນຈະຊ່ວຍໃຫ້ຜູ້ອ່ານໄດ້ຮັບທັງລົດຊາດ ດ້ານວັນນະຄະດີເຊັ່ນ: ມ່ວນຊື່ນ ຕື່ນເຕັ້ນ ຮັກ ສົມຫວັງ ຫຼື ໂສກເສົ້າ ຄຽດຊັງ...ໄດ້ຮັບທັງສາລະປະໂຫຍດ ແລະສິ່ງເຫຼົ່ານັ້ນຈະກາຍເປັນພະລັງແຮງປະກອບສ່ວນກະຕຸກຊຸກຍູ້ຂະບວນການພັດທະນາຊົນນະບົດ ແລະລຶບລ້າງຄວາມທຸກຍາກ ຂອງປະຊາຊົນ ໃຫ້ກ້າວໄປສູ່ຄວາມສຳເລັດຕາມລະດັບຄາດໝາຍ ທີ່ພັກ ແລະລັດຖະບານວາງໄວ້.

ສຳນັກພິມ ນັກປະພັນລາວ ຂໍສະແດງຮູ້ບຸນຄຸນ ຕໍ່ຄະນະໂຄສະນາອົບຮົມສູນກາງພັກ, ຄະນະຊີ້ນຳພັດທະນາຊົນນະບົດ ແລະລຶບລ້າງຄວາມທຸກຍາກແຫ່ງຊາດ ກໍຄືກະຊວງຖະແຫຼງຂ່າວ ວັດທະນະທຳ ແລະທ່ອງທ່ຽວ ແລະສະມາຄົມນັກປະພັນລາວ ທີ່ໄດ້ຊີ້ນຳ ແລະອຳນວຍໃຫ້ໂອກາດບັນດານັກປະພັນ ນັກກະວີ ແລະສຳນັກພິມ ນັກປະພັນລາວ ໄດ້ນຳເອົາບັນດາບົດເລື່ອງສັ້ນ ແລະບົດກະວີ ອັນກັ່ນກອງອອກມາຈາກແນວຄິດ ຈິດໃຈ ແລະສະຕິປັນຍາ ປະກອບສ່ວນເຂົ້າໃນຂະບວນການພັດທະນາຊົນນະບົດຮອບດ້ານ ແລະລຶບລ້າງຄວາມທຸກຍາກຂອງປະຊາຊົນໃນຄັ້ງນີ້ ແລະຂໍຂອບໃຈທຸກໆຄົນທີ່ໄດ້ເຮັດໃຫ້ການຈັດພິມປຶ້ມຊຸດນີ້ສຳເລັດຕາມລະດັບຄາດໝາຍ

ຜູ້ອຳນວຍການ ແລະຫົວໜ້າບັນນາທິການ
ສຳນັກພິມ ນັກປະພັນລາວ
ທັງເຫີນ ຂຸນພິທັກ

# ຄຳເຫັນຂອງ ຫົວໜ້າ ຄະນະໂຄສະນາອົບຮົມສູນກາງພັກ

ໃນປັດຈຸບັນ ແລະສະເພາະໜ້ານີ້ ຄວາມທຸກຍາກຂອງປະຊາຊົນ ໂດຍສະເພາະປະຊາຊົນໃນເຂດຊົນນະບົດ ຍັງເປັນບັນຫາໃຫຍ່ ທີ່ທົ່ວພັກ, ລັດ, ການຈັດຕັ້ງທຸກພາກສ່ວນໃນສັງຄົມ ກໍຄືປະຊາຊົນ ພວມຮີບຮ້ອນສຸມໃສ່ແກ້ໄຂ ເພື່ອເຮັດໃຫ້ປະຊາຊົນໂດຍສະເພາະຜູ້ຢູ່ໃນເຂດຊົນນະບົດ ເຂດຫ່າງໄກສອກຫຼີກ ໃຫ້ຫຼຸດພົ້ນຈາກຄວາມທຸກຍາກ, ກ້າວໄປເຖິງລຶບລ້າງຄວາມທຸກຍາກ ແລະດ້ອຍພັດທະນາ ອອກຈາກປະເທດເຮົາຕາມຄາດໝາຍສູ້ຊົນພັດທະນາປະເທດເຮົາ ແລະແຜນງານລຶບລ້າງຄວາມທຸກຍາກ.

ເພື່ອປະກອບສ່ວນປຸກລະດົມ ປະຊາຊົນບັນດາເຜົ່າ ພັດທະນາຕົນເອງ, ຄອບຄົວ, ບ້ານເມືອງ ໃຫ້ພົ້ນຈາກຄວາມທຸກຍາກ ແລະມີຄຸນນະພາບຊີວິດດີຂຶ້ນທຸກດ້ານ, ຄະນະໂຄສະນາອົບຮົມສູນກາງພັກ ໂດຍການຮ່ວມມືຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ, ຄະນະພັດທະນາຊົນນະບົດ ແລະລຶບລ້າງຄວາມທຸກຍາກແຫ່ງຊາດ ໄດ້ຊີ້ນຳສະມາຄົມນັກປະພັນລາວ ຈັດຕັ້ງບັ້ນກວດສອບຂຽນບົດປະພັນເລື່ອງສັ້ນ ແລະກະວີ ທີ່ມີເນື້ອໃນກ່ຽວກັບບົດຮຽນ, ປະສົບການໃນການພັດທະນາ.

ບົດເລື່ອງສັ້ນ ແລະກະວີເຫຼົ່ານີ້ ນອກຈາກຈະໃຫ້ຄວາມມ່ວນຊື່ນເພີດເພີນ ນຳເນື້ອໃນແລະສິລະປະຂອງເລື່ອງ, ສຳຄັນຍິ່ງກວ່ານັ້ນ ແມ່ນຈະຊ່ວຍໃຫ້ຜູ້ອ່ານໄດ້ຮູ້ບາງບົດຮຽນ,ບາງແບບຢ່າງພັດທະນາດ້ານເສດຖະກິດ, ແບບແຜນດຳລົງຊີວິດ, ການສຶກສາ, ສຸຂະພາບ ແລະອື່ນໆຂອງ ແຕ່ລະບຸກຄົນ, ຄອບຄົວ, ການຈັດຕັ້ງ, ສັງຄົມຢູ່ຮາກຖານບ້ານ.

ເພື່ອໃຫ້ປະຊາຊົນຊາວບ້ານ ຮວມທັງຜູ້ອ່ານໜັງສືບໍ່ໄດ້ ຫຼື ບໍ່ໄດ້ດີໄດ້ຮູ້ເນື້ອໃນສາລະປະໂຫຍດໃນບົດວັນນະຄະດີເຫຼົ່ານີ້ຢ່າງກວ້າງຂວາງ, ທົ່ວເຖິງ. ທາງການຈັດຕັ້ງບ້ານ, ພະນັກງານເຮັດວຽກພັດທະນາຢູ່ຮາກຖານອາດຈະຊອກຫຼາຍວິທີການຈັດຕັ້ງການອ່ານ, ເລົ່າ ຫຼື ແຂ່ງຂັນກັນຮັບຮູ້ເນື້ອໃນຂອງແຕ່ລະບົດແມ່ນເປັນການດີ.

ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນຢ່າງສູງມາຍັງການຈັດຕັ້ງທຸກພາກສ່ວນ, ນັກປະພັນ ທີ່ໄດ້ໃຫ້ການຮ່ວມມື ເຮັດໃຫ້ປຶ້ມເຫຼັ້ມນີ້ໄດ້ພິມອອກມາ ແລະນຳສົ່ງເຖິງຜູ້ອ່ານຕາມຈຸດປະສົງເປົ້າໝາຍ.

ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ
ເຈືອງ ສົມບູນຂັນ



# ເສັ້ນທາງ
# ສູ່ຄວາມຢູ່ດີມີສຸກ

**ໂດຍ: ຍິວລາວັນ ຫຼວງວັນນາ**

ຂ້ອຍໄດ້ຍິນ ພະນັກງານສະຫະພັນແມ່ຍິງ ແຂວງອັດຕະປືເວົ້າໃຫ້ຟັງວ່າ "*ມີແມ່ຍິງຜູ້ໜຶ່ງ ລາວອອກໄປບ້ານນອກໆ ລ້ຽງລູກສາມຄົນ, ສາມາດເລີ່ມແຕ່ສອງຝາມືເປົ່າ ເຮັດໜອງປາ, ລ້ຽງປາແບບທຳມະຊາດ, ເກັບເງິນເຂົ້າຄອບຄົວໄດ້ປີລະພັນປາຍລ້ານ ຫຼື ຕື້ປາຍ ພຽງສີ່ຫ້າປີກໍກາຍເປັນຄົນຮັ່ງມີ*"

ຂ້ອຍເກີດຄວາມຢາກຮູ້ ຢາກເຫັນຕົວຈິງ ຢາກເອົາບົດຮຽນ ໄປເລົ່າສູ່ຊາວບ້ານຂອງຕົນ ຜູ້ຍັງທຸກຍາກລອງເຮັດນຳ, ຂ້ອຍເລີຍໄປເບິ່ງ. ຂ້ອຍໄປຮອດໜອງປາ, ກໍພໍດີຕາເວັນທ່ຽງຟ້າ, ຍ້ອນໜອງປາ ຢູ່ໄກຕົວເມືອງຊານໄຊ ອອກທາງເຂດປ່າໄມ້ ແລະທົ່ງນາຂອງ ຊາວບ້ານຊົນນະບົດ.

ພາບທີ່ເຫັນຢູ່ຕໍ່ໜ້າຂ້ອຍ ແມ່ນໜອງປາກ້ວາງ 20 ແມັດຄູນ 40 ແມັດ ຕັ້ງວ່າ 25 ໜອງ ຈັດລຽງກັນສະເໝີປານຕາຜ້າຂາວມ້າ ໃນເນື້ອທີ່ 3 ເຮັກຕາປາຍ, ເບິ່ງນ້ຳໜອງໃດກໍໃສຈົນເປັນສີຂຽວເຕັມເລື່ອນໆ ແລະໄຫຼລົງທໍ່ນ້ຳປ່ອງໃສ່ກັນໄຈກໆເຈກໆ, ເຫັນປາບ້ອນ ບ່ວຍບ່າຍທົ່ວໜອງຄັນຄູລະຫວ່າງໜອງ ຄັນໃດກໍ້ຮຽງອາດຫຼາດ, ຄັນຢູ່ກາງ, ລົດໃຫ່ຍພວກຂ້ອຍແລ່ນເຂົ້າໄປໄດ້ສະບາຍ. ສິ່ງເຫຼົ່ານັ້ນ ເຮັດໃຫ້ຂ້ອຍຕົກຕະລຶງ ແລະຍິ່ງຢາກເຫັນໜ້າເຈົ້າຂອງໜອງ, ຢາກຖາມວ່າ ລາວເຮັດແນວໃດລາວຈຶ່ງໄດ້ສ່ຳນີ້. ລາວເອົາຫີນມາແຕ່ໃສ, ລົງທຶນຫຼາຍປານໃດ.

ຜ່ານກາງແຖວໜອງປາ ບໍ່ພໍເທົ່າໃດນາທີ ພວກຂ້ອຍກໍຕົກ ຕະລຶງອີກ ທີ່ເຫັນເຮືອນໄມ້ທາ ສີ ງາມໆ, ຝາປະຕູແກ້ວ, ມຸງກະເບື້ອງ ຖືກປະດັບດ້ວຍຕົ້ນດອກໄມ້ນານາສີອ້ອມຮອບ ຕັ້ງຢູ່ສັ້ນດິນເຮັດໜອງ ມີແມ່ຍິງ ໜ້າຕາຈົບງາມ, ໜຸ່ມແໜ້ນ, ແຕ່ງຕົວແບບຄົນໃນເມືອງ ອອກເຮືອນມາ ຍໍມືນົບທັກທາຍພວກຂ້ອຍ.

"ນີ້ແມ່ນເອື້ອຍສະຫວັນວາລີ ເຈົ້າຂອງໜອງປາ"

ພະນັກງານແມ່ຍິງ ຜູ້ພາທາງ ແນະນຳນາງຕໍ່ຂ້ອຍ ພາຍຫຼັງທັກທາຍກັນແລ້ວ ຂ້ອຍຖາມນາງເຈົ້າຂອງໜອງປາວ່າ: :

" ຄອບຄົວນ້ອງ ຢູ່ນີ້ ມີຈັກຄົນ ?"

ລາວຕອບວ່າ :

"ມີສີ່ຄົນ, ລູກສາວຫຼ້າ ອາຍຸ 16 ປີ ຫຼານສາວຜູ້ໜຶ່ງ ແລະຫຼານຊາຍຜູ້ໜຶ່ງ ກັບນ້ອງຢູ່ເຝົ້າໜອງປາ, ສ່ວນລູກສາວຜູ້ໃຫຍ່ ສອງຄົນຮຽນຢູ່ວຽງຈັນ.

ເຫັນເນື້ອໜັງ ຕົນມືສະຫວັນວາລີສະອາດສວຍງາມ, ຂ້ອຍເລີຍເດົາວ່າລາວຄົງເຮັດແຕ່ໜ້າທີ່ຄຸມວຽກ, ສ່ວນຜູ້ເຮັດວຽກ ຄົງມີແຕ່ຜູ້ອື່ນຂ້ອຍຈຶ່ງຖາມວ່າ:

"ແມ່ນໃຜເປັນຜູ້ບົວລະບັດໜອງປາ, ເກືອປາ, ລ້ຽງເປັດໃຫ້ນ້ອງ"

ລາວຕອບຢ່າງບໍ່ລັ່ງເລໃຈວ່າ:

" ກໍແມ່ນນ້ອງນີ້ແຫຼະ ເປັນຜູ້ເກືອປາທັງ 25 ໜອງ, ເກືອເປັດ ແລະ ປັບນ້ຳເຂົ້າອອກແຕ່ລະໜອງ ທັງຕິດຕາມ, ເກັບໄຂ່ປາຝາມາຟັກ, ລ້ຽງປາຝາອະນຸບານໃສ່ອ່າງແລ້ວ ປ່ອຍພວກມັນລົງໜອງ. ນອກຈາກນ້ອງກໍຍັງມີຫຼານຊາຍຜູ້ໜຶ່ງຊ່ວຍ ແລະລູກສາວຫຼ້າຊ່ວຍຕື່ມ ຍາມພັກຮຽນມາແຕ່ໃນເມືອງ. ສ່ວນວຽກຕັດຫຍ້າ ຖາງຄັນໜອງ, ວຽກໜັກອື່ນໆ ແມ່ນຈ້າງໄທບ້ານຢູ່ມໍ່ນີ້ເຮັດ"

ໄດ້ຍິນວ່າມີປາຝາ ຂ້ອຍຖາມສໍ້ອີກ:

" ນ້ອງລ້ຽງປາຝາແດ່ຫວາ ?"

" ແມ່ນແລ້ວ, 5 ໜອງ ຢູ່ໃກ້ເຮືອນນີ້ ແມ່ນໜອງປາຝາ, ສ່ວນປາສະຫວາຍ, ປາປາກ.ປານິນ, ປາດຸກ ລ້ຽງໃສ່ໜອງຖັດໆ ໄປພຸ້ນ"

" ໜອງປາຫຼາຍປານນີ້ ນ້ອງເອົາຫຍັງມາເກືອ, ນ້ອງຕ້ອງລົງທຶນຊື້ແນວມາເກືອຫຼາຍບໍ?"

ນາງເລົ່າໃຫ້ຟັງວ່າ :

"ອາຫານຕົ້ນຕໍເກືອປາແຕ່ລະມື້ ສ່ວນຫຼາຍແມ່ນຂີ້ຄວາຍແຫ້ງ, ເຂົ້າແຫ້ງ, ຮຳ, ນອກນັ້ນກໍມີເຄື່ອງເສດເຫຼືອຄົນກິນ. ຂີ້ຄວາຍແຫ້ງເປັນອາຫານທຳມະຊາດຂອງປາ, ຍ້ອນມັນແຊ່ນ້ຳໃນໜອງແລ້ວ ເກີດມີໄຄສີຂຽວນ້ອຍໆຂຶ້ນຫຼາຍໆ. ປາອາໄສກິນໄຄນັ້ນໄດ້ຕະຫຼອດ, ຂີ້ຄວາຍກໍແມ່ນຫຍ້າມຸ່ນນ້ອຍໆ ມັນກໍຍັງມີທາດເຮັດໃຫ້ນ້ຳໃສ, ບໍ່ມີກິ່ນເໝັນເນົ່າ, ເຮັດໃຫ້ປາຢູ່ສະບາຍ ແລະໃຫຍ່ໄວ, ກິນໄຄຂີ້ຄວາຍ ເຮັດໃຫ້ຊີ້ນປາບໍ່ມີສາບ ເຄມີຄືຊີ້ນປາທີ່ກິນຫົວອາຫານ, ຊີ້ນປານີ້ ມີກິ່ນຫອມ ຄືປາທຳມະຊາດເຊິ່ງຄົນກໍມັກກິນ. ແຕ່ລະເດືອນ ກໍຕ້ອງເຕີມຂີ້ຄວາຍແຫ້ງລົງແຕ່ລະໜອງຫຼາຍເປົາ, ທັງຊາວຫ້າໜອງໝົດຫຼາຍຮ້ອຍກິໂລ, ແຕ່ກໍ່ກຸ້ມທຶນ ແລະມີກຳໄລດີ"

"ນ້ອງເອົາຂີ້ຄວາຍມາແຕ່ໃສ ຫຼາຍແທ້ ?"

ລາວຕອບວ່າ :

" ຂີ້ຄວາຍ ຢູ່ເຂດນີ້ຫາງ່າຍຢູ່, ເພາະຊາວບ້ານລ້ຽງຄວາຍ ນຳປ່າດົງ, ທົ່ງນານີ້ຫຼາຍ, ນ້ອງສັ່ງຊື້ນຳໄທບ້ານ, ຂີ້ຄວາຍແຫ້ງ ກິໂລລະຫ້າຮ້ອຍກີບ ຫຼືເປົາລະ 20 ພັນກີບ, ຕາງໃຫ້ຊາວບ້ານມີວຽກເຮັດງານທຳ, ມີລາຍໄດ້ແບບງ່າຍໆ ແລະເປັນການໝູນໃຊ້ຂີ້ຄວາຍນຳປ່ານຳດົງເຂດບ້ານນີ້ ແລະບ້ານອື່ນໆ. ຂີ້ຄວາຍ ຂີ້ງົວເປັນອາຫານປາທີ່ມີຢູ່ບ້ານເຮົານີ້ເອງ, ບໍ່ໄດ້ເສຍຄ່າຂົນສົ່ງໄກ, ດັ່ງນັ້ນລາຄາກໍບໍ່ແພງ, ນ້ອງເກັບຊື້ໄວ້ຫຼາຍຈົນຕ້ອງໄດ້ປຸກເຮືອນສາງໄວ້ຂີ້ຄວາຍແຫ້ງຢູ່ນັ້ນເດ"

ລາວຊີ້ໃສ່ເຮືອນຫຼັງໜຶ່ງຢູ່ໃກ້ໆ ນັ້ນ.

" ຄັນຊັ້ນເຂົ້າແຫ້ງນ້ອງເອົາມາແຕ່ໃສ ?"

" ນ້ອງຊື້ເປັນກິໂລ ຫຼືເປັນເປົາ ຕາມວັດຕ່າງໆ ໃນຕົວເມືອງຂອງແຂວງພຸ້ນ, ຊິວ່າບູຊາເອົາກໍແມ່ນ, ນ້ອງໃຫ້ຄົນໄປຕິດຕໍ່ຊື້ນຳສັງກະລີວັດ. ເຂົ້ານັ້ນ ແມ່ນເຂົ້າ ທີ່ຄູບາໄປບິນບາດມາ ຫຼື ຍາມບຸນ ວັນສິນ ມີຕັກບາດໃນວັດ, ໄດ້ເຂົ້າຫຼາຍເຫຼືອຄູບາສັນ (ກິນ) ສັງກະລີ ກໍເກັບທ້ອນ ແລະຕາກໄວ້, ເງິນທີ່ຂາຍເຂົ້າ ກໍເອົາເປັນຂອງວັດ. ພວກເຮົາຊື້ກິໂລລະສອງພັນກີບ, ແຕ່ລະເດືອນເຮົາຊື້ເຂົ້າແຫ້ງ ຫຼາຍສິບເປົາໃຫຍ່ມາປະສົມກັບຮຳເກືອປາ ທັງຊາວຫ້າໜອງ, ເປັນອາຫານເສີມໃສ່ຂີ້ຄວາຍ"

ຂ້ອຍຖາມອີກວ່າ:

" ນ້ອງເຄີຍໄດ້ຄິດໄລ່ເບິ່ງບໍ, ຕັ້ງແຕ່ເຮັດໜອງປາມາຮອດປະຈຸບັນທຶນທີ່ລົງໄປ ລາຍຮັບທີ່ໄດ້ມາ,ໄດ້ກຳໄລຫຼາຍປານໃດ ?"

"ນ້ອງຄິດໄລ່ຢູ່ເລື້ອຍໆ, ເຫັນວ່າມີກຳໄລນັບມື້ຫຼາຍທົບ, ທຳອິດເຮືອນນ້ອງກໍຢູ່ໃນເມືອງ ນ້ອງກໍບໍ່ມີທຶນ, ນ້ອງໄດ້ໄປຢືມເງິນນຳທະນາຄານ

ນະໂຍບາຍ 300 ລ້ານ ແລະເຊົ່າດິນຫຼວງ 3 ເຮັກຕາຢູ່ບ້ານນອກ ນີ້ເຮັດໜອງປາ, ແຕ່ທາງເມືອງເພິ່ນອະນຸຍາດ ໃຫ້ເຮັດໄປກ່ອນ ໂດຍບໍ່ຕ້ອງເສຍຄ່າເຊົ່າເທື່ອ ເພິ່ນວ່າຢາກໃຫ້ນ້ອງເຮັດໄປ ເພື່ອເປັນຕົວແບບໃຫ້ຜູ້ອື່ນທຳການຜະລິດ ແລະກໍເພື່ອໃຫ້ມີປາປ້ອນຕະຫຼາດຢູ່ເມືອງ ຢູ່ແຂວງເຮົາເປັນປະຈຳ. ນ້ອງເອົາເງິນທີ່ຢືມມາລົງທຶນຂຸດໜອງປາ, ຊື້ພັນປາ ແລະຊື້ອາຫານເກືອປາຄັ້ງທຳອິດກໍໝົດທຶນຢືມມາ, ບໍ່ດົນກໍໄດ້ຂາຍປາ ມີເງິນພໍເປັນທຶນຊື້ອາຫານປາ, ແຕ່ເກືອບໄປບໍ່ລອດເພາະຮຳ, ຫົວອາຫານກໍແພງ ນ້ອງຕັດສິນໃຈໄປຖາມພະນັກງານເຮັດວຽກກະສິກຳຢູ່ເມືອງ, ແຂວງ. ສຸດທ້າຍກໍໄດ້ຮັບການແນະນຳ ໃຫ້ເຂົ້າຮ່ວມຊຸດອົບຮົມ ລ້ຽງປາແບບທຳມະຊາດ.

ພາຍຫຼັງ ຮູ້ນຳໃຊ້ຂີ້ຄວາຍລ້ຽງປາ, ແລະກໍເອົາຜັກບົ້ງນ້ຳ ມາປູກໃຫ້ປາກິນຕື່ມ. ຕົ້ນທຶນໃຊ້ຈ່າຍຊື້ອາຫານເກືອປາຫຼຸດລົງກັບບາດ,ຂາຍປາກໍໄດ້ກຳໄລດີຂຶ້ນ ສືບຕໍ່ມາເລື້ອຍໆ ຈົນສາມາດຂະຫຍາຍການລົງທຶນ ແລະພໍທ້ອນໂຮມ ມາເຮັດເຮືອນ, ປຸກສາງ, ຈ້າງຄົນຖາງຫຍ້າ ຄັນຄູໜອງທຸກເດືອນ ເພື່ອບໍ່ໃຫ້ງູມາລີ້ຈອບກິນປາ. ນອກນັ້ນກໍປູກຜັກບົ້ງນ້ຳໃສ່ຕາມຫວ່າງໜອງບ່ອນເປັນຮ່ອງນ້ຳຊຶມ ແລະລ້ຽງເປັດໄຂ່, ດຽວນີ້ມີເປັດ ເກືອບພັນໂຕ, ເປັດກໍກິນຜັກບົ້ງ ທີ່ປູກໄວ້ໃຫ້, ບໍ່ເປືອງຮຳຫຼາຍ, ດຽວນີ້ແຕ່ລະມື້ເກັບໄຂ່ເປັດຂາຍ ມື້ລະສີ່ຫ້າຮ້ອຍໜ່ວຍ, ຟັກເປັດນ້ອຍຂາຍໃຫ້ຊາວບ້ານເອົາໄປລ້ຽງຄູ່ລະ 20 ພັນກີບ, ເຮັດໄຂ່ເຄັມຂາຍ, ຂາຍໄຂ່ສົດ. ລາຍໄດ້ທັງໝົດເອົາມາຈ່າຍເຂົ້າວຽກລ້ຽງປາ, ຮັກສາໜອງ ລ້ຽງເປັດ ແຕ່ລະເດືອນກໍຍັງເຫັນກຳໄລຫຼາຍຢູ່ ປະມານຕື້ປາຍຕໍ່ເດືອນ, ລົບທຶນອອກແລ້ວກໍຍັງເຫຼືອເກືອບຮອດຕື້ ເພື່ອໃຊ້ຈ່າຍຄ່າຮຽນໃຫ້ລູກຢູ່ວຽງຈັນ ແລະ ໃຊ້ຈ່າຍປະຈຳວັນ, ແລະທ້ອນໄວ້ລົງທຶນຕໍ່ໄປ"

ຂ້ອຍຖາມວ່າ :

"ລາຍໄດ້ຫຼາຍກວ່າໝູ່ຂອງນ້ອງ ແມ່ນໄດ້ມາຈາກຂາຍປາຫຍັງ ?"

"ຂາຍປາຝາ ເພາະປາຝາມີລາຄາແພງ, ເປັນປາລ້ຽງທຳມະຊາດ ໄດ້ຂາຍກິໂລລະ 130.000 ກີບ. ດຽວນີ້ຂາຍສົ່ງໄປວຽງຈັນອາທິດລະ 3 ຄັ້ງ, ຄັ້ງລະ 100 ກວ່າໂຕ, ໄດ້ຈ່າຍເງິນລົງທຶນປະມານ 13 ລ້ານກີບຕໍ່ມື້. ດຽວນີ້ມີປາຝາລ້ຽງຢູ່ໃນໜອງປະມານ 5 ພັນໂຕ, ເຮົາເພາະພັນເອົາເອງ, ເຮົາມີໜອງໜ້ອຍ ລ້ຽງຫຼາຍບໍ່ໄດ້, ແຕ່ຄົນສັ່ງຊື້ຫຼາຍ ສ່ວນຫຼາຍແມ່ນພວກໂຮງແຮມໃຫຍ່ໆຢູ່ວຽງຈັນ, ເຂົາເຈົ້າຕ້ອງການມື້ລະ 2 ເຖິງ 3 ໂຕນ, ແຕ່ເຮົາສົ່ງໃຫ້ໄດ້ ພຽງອາທິດລະສາມສີ່ຫ້າຮ້ອຍກິໂລເທົ່ານັ້ນ, ແຕ່ກໍໄດ້ກຳໄລດີ, ຕໍ່ມາແມ່ນຂາຍປາປາກ, ປານິນ ສົ່ງໃຫ້ຕະຫຼາດໃນແຂວງ, ໃນເມືອງເທົ່າໃດກໍ່ບໍ່ພໍ ແມ່ຄ້າເອົາລົດໃຫຍ່ມາຊື້ຢູ່ກັບໜອງ ກິໂລລະ 20 ພັນກີບ ແຕ່ຍັງບໍ່ພໍກັບຄວາມຕ້ອງການຂອງຕະຫຼາດ"

"ຕໍ່ໄປນ້ອງຈະຂະຫຍາຍກິດຈະການຫຍັງອີກ" ຂ້ອຍຖາມສໍ້

"ນ້ອງຈະລ້ຽງປາຝາ ລ້ຽງເປັດເພີ່ມຕື່ມ ແລະຈະລ້ຽງໄກ່ອີກຫຼາຍພັນໂຕ, ດຽວນີ້ພວມເຮັດຄອກບັນຈຸໃຫ້ໄດ້ 3 ພັນໂຕກ່ອນ,ເພາະອ້າຍນ້ອງຫວຽດນາມທີ່ລົ້ງເຄີຍມາຢ້ຽມ ເບິ່ງກິດຈະການ,ເຫັນນ້ອງເອົາເປັດຟັກໄຂ່, ຂາຍເປັດນ້ອຍເພິ່ນກໍເລີຍເອົາຕູ້ຟັກໄຂ່ມາຊ່ວຍເຫຼືອ. ດຽວນີ້ໄຂ່ເປັດກໍເລີ່ມຟັກໃສ່ຕູ້ຢູ່ນີ້ແລ້ວ ຈະບໍ່ໃຫ້ແມ່ມັນຟັກເອງອີກ, ເພິ່ນວ່າບໍ່ຄິດຄ່າຫຍັງເຫັນຄົນມັກເຮັດມັກສ້າງ ກໍ່ຢາກຊ່ວຍໃຫ້ເຮັດໄດ້ດີວ່າຊັ້ນ"

"ເງິນຢືມທະນາຄານສາມຮ້ອຍລ້ານນັ້ນ ນ້ອງສົ່ງຄືນໝົດແລ້ວບໍ?"

"ສົ່ງຄືນໝົດແຕ່ປີກາຍພຸ້ນ ແຕ່ນີ້ເມືອໜ້າ ມີແຕ່ເອົາກຳໄລຂອງການຜະລິດມາເປັນທຶນ"

ແນມໄປຮອບໆ ໜອງປາ ເຫັນແຕ່ປ່າໄມ້ ກັບທົ່ງນາ ຂ້ອຍເລີຍຖາມສະວັນວາລີວ່າ :

"ຂໍໂທດແດ່ ເຮືອນຂອງນ້ອງໄກບ້ານຄົນແນວນີ້ ນ້ອງບໍ່ເຫງົາ ຫຼືບໍ່ຢ້ານຫຍັງບໍ ?"

"ບໍ່ມີຫຍັງເປັນຕາຢ້ານ, ຢູ່ປ່າດົງໄມ້ໃຫຍ່ຕິດໜອງເບື້ອງນັ້ນ ແມ່ນປ່າຊ້າຂອງບ້ານນີ້, ແຕ່ກໍເປັນທາງຫຼວເກັບຂີ້ຄວາຍຂອງໄທບ້ານ, ສ່ວນຄົນຮ້າຍກໍຄົງຈະບໍ່ມີ ເພາະໄທບ້ານອ້ອມແອ້ມນີ້ແມ່ນຄົນຮັກແພງເຮົາໝົດ, ລູກຫຼານເຂົາກໍມາຮັບຈ້າງ ເຮັດວຽກຊ່ວຍເຮົາ. ພ້ອມນີ້ ເຮົາມີວັດຖຸປັດໄຈຊ່ວຍສ່ວນລວມບ້ານເລື້ອຍໆ ແລະເຮົາກໍໄດ້ແນະນຳບົດຮຽນລ້ຽງປາ, ລ້ຽງເປັດ ຂາຍພັນປາ ໃຫ້ເຂົາເຈົ້າໄປລ້ຽງຢູ່ຫຼາຍຄອບຄົວ, ຄອບຄົວທຸກຍາກ ນ້ອງກໍເອົາໃຫ້ລ້າໆ ເຂົາເຈົ້າກໍນຳໄປລ້ຽງ, ຫຼາຍຄອບຄົວກໍມີຢູ່ ມີກິນຍ້ອນ. ມີວຽກງານຫຍັງ ຂອງບ້ານເຮົາກໍເຂົ້າຮ່ວມ, ສຳມະໂນຄົວກໍຂຶ້ນຢູ່ບ້ານພີ້ ເພາະເຮືອນໃນເມືອງເຮົາກໍບໍ່ສູ້ຢູ່. ອີກຢ່າງໜຶ່ງ ຢູ່ນີ້ແຕ່ລະມື້ກໍມີຄົນມາເຮັດວຽກຊ່ວຍຫຼາຍຄົນ ແລະກໍມີແຂກຄົນມາຢາມ, ມາຖອດຖອນບົດຮຽນ, ມາຊື້ປາ, ຊື້ໄຂ່ເປັດບໍ່ໄດ້ຂາດ.

ພວກຂ້ອຍຍ່າງເລາະເບິ່ງໜອງຢ່າງເພີດເພີນ ທັງຄຶດຫງຳໄປນຳວ່າ: ລ້ຽງປາກໍບໍ່ຍາກ ອັນໃດກໍມີຢູ່ບ້ານເຮົາໝົດ, ພຽງແຕ່ກ້າຄຶດ, ກ້າແລ່ນຢືມທຶນມາລົງໃສ່ ແລະດຸໝັ່ນ,ອົດທົນ,ປະຢັດໃຊ້ຈ່າຍ ກໍຮັ່ງມີລ້ຳ ລວຍໄດ້ຢູ່. ຄວາມຈິງໄທບ້ານຂ້ອຍແຮ່ງມີເງື່ອນໄຂຫຼາຍກ່ວາຢູ່ນີ້, ເຂົາເຈົ້າຮູ້ບົດຮຽນນີ້ແລ້ວ, ແນ່ນອນເຂົາກໍ່ຈະມີຜູ້ເຮັດໄດ້ດີເທົ່ານາງ ຫຼືດີລື່ນນາງນີ້ອີກ.



# ຂຸມຄຳ ຄູບຳນານ

**ໂດຍ: ວິເສດ ສະແຫວງສຶກສາ**

*ສານແຫຼູກ້ອງຮົ່ມໄມ້ ຫຼືໃກ້ທາງຄົນນັ້ນ ຜີບ້ານ ຜີເມືອງ*
*ມາຊ່ວຍໃຫ້ໂຊກໃຫ້ໝານ ແລະວ່າຍ້ອນມີຄົນມາຈັບ ມາບາຍຫຼາຍ*
*ຈຶ່ງຕຶກປາໄດ້ດີ ທີ່ແທ້ມັນບໍ່ແມ່ນແນວນັ້ນ.*
*ມັນແມ່ນພູມປັນຍາຂອງເຖົ້າແກ່ບູຮານທີ່ປະໄວ້ເປັນປິດສະໜາ.*
*ການສານແຫ ຫຼືຕ່ຳຫູກໃນບ່ອນມີຄົນທຽວໄປທຽວມາເຊັ່ນ*
*ໃກ້ທາງຄົນນັ້ນ ມີໂອກາດໄດ້ຮັບຄຳຕຳ ນິຕິຊົມ ແລະຄຳເຫັນທີ່ເປັນ*
*ປະໂຫຍດ. ຄຳຕຳນິຕິຊົມນີ້ລະ ຈະຊ່ວຍເຮົາປັບປຸງ ຄຸນນະພາບຂອງ*
*ຜົນຜະລິດ ປະຊາຊົນຊຶ່ງແມ່ນຈຳນວນຄົນອັນຫຼວງຫຼາຍໃນສັງຄົມນັ້ນຄື*
*"ທ້າວພັນຕາ ພະຍາພັນຫູ"*

ໃນປີຊວດຜ່ານມາ, ອາຍຸລຸງຄູບຸ່ນ ຢ່າງເຂົ້າຮອບທີຫົກ ແປວ່າໄດ້ເຈັດສິບສອງປີ, ໃນນັ້ນເປັນຄູປະຖົມປະຈຳ ບ້ານປາຂຶ້ນສາມສິບຫ້າປີ ແລະກິນບຳນານມາແລ້ວສິບສອງປີ. ຕອນລຸງຄູອອກກິນເບັ້ຍບຳນານ ເມື່ອອາຍຸໄດ້ຫົກສິບຖ້ວນນັ້ນ ຊາວບ້ານພາກັນງົງຈົນຕົກຕະລຶງ ຊຶງເຊີ້.

ເປັນຫຍັງ ລຸງຄູບຸ່ນຈຶ່ງອອກຄູ ?

ລຸງເຮັດຜິດຫຍັງ?

ທຸກຄົນຍັງຈື່ໄດ້ດີວ່າ ກ່ອນຈະຊາບຂ່າວອອກກິນເບັ້ຍບຳນານຂອງລູງຄູນັ້ນ ມີພະນັກງານສຶກສາເມືອງ ແລະຜູ້ຕິດຕາມລົງມາພົບລຸງຢູ່ເຮືອນ ພ້ອມທັງຍື່ນເຈ້ຍຈ້ຳກາແດງ ມີລາຍເຊັນໄກ່ເຂ່ຍແຂວນຢູ່ເບື້ອງລຸ່ມໃຫ້ລຸງ.

ເລື່ອງລຸງຄູບຸ່ນ ຖືກໄລ່ອອກການ ຕາມຄວາມເຂົ້າໃຈ ຂອງຊາວບ້ານປາຂຶ້ນນັ້ນ ແຜ່ລາມໄປໄວປານໄຟໄໝ້ປ່າ ເຖິງຂັ້ນວ່າມີຫຼາຍຄົນຂານອາສາໄປຕໍ່ວ່າ ຕໍ່ຂານ ຢູ່ຫ້ອງການສຶກສາເມືອງ ແຕ່ຖືກລຸງຄູຫ້າມໄວ້ດ້ວຍສຽງທຳມະດາວ່າ ຄົນເຮົາຈະບໍ່ຄ້ຳຟ້າ ຢູ່ບ່ອນເກົ່າຈັກເທື່ອ, ຊາຫຍັງໜ້າທີ່ການງານ ເຊິ່ງເປັນຂອງນອກກາຍ ແມ່ນແຕ່ຊີວິດ ເຊິ່ງທຸກຄົນຖືວ່າຕົນເປັນເຈົ້າຂອງແທ້ໆ ສຸດທ້າຍກໍຍັງຕ້ອງສົ່ງຄືນໃຫ້ທຳມະຊາດຄືເກົ່າ.

ສຳລັບລຸງຄູບຸ່ນແລ້ວ ການຢູ່ ຫຼືການອອກກິນບຳນານ ມັນບໍ່ມີຫຍັງແຕກຕ່າງກັນ, ເພາະຄົນຍັງເອີ້ນລຸງຕິດປາກວ່າລຸງຄູບຸ່ນ ຕ່າງແຕ່ວ່າດຽວນີ້ລຸງບໍ່ໄດ້ຈັບປຶ້ມ, ບໍ່ໄດ້ເລາະແຖວໂຕະລູກສິດຢູ່ຫ້ອງຮຽນ, ບໍ່ໄດ້ປັດຝຸ່ນສໍ

ຂາວອອກຈາກຄໍາເສື້ອ, ບໍ່ໄດ້ຢູ່ພາຍໃຕ້ການບັນຊາຂອງສຽງກະລໍ ເຄາະອອກ ເຄາະເຂົ້າ. ຫ້ອງຮຽນຂອງລຸງຄູ ໃນໄວໃກ້ຝັ່ງນີ້ແມ່ນຢູ່ທົ່ງນາ, ຢູ່ວັດ, ຢູ່ພິທີປົງສົບໃນປ່າຊ້າຫົວນາ. ລຸງນໍາພາໄຫວ້ພະສູດເຮືອນ, ເປັນໝໍພອນຮຽກຂວັນຕາມເຮືອນຫຼັງສູງ ລົງເຖິງຕູບຕອງເຕ້ຍຕໍ່າ. ລຸງເປັນຄູໃນດວງໃຈຂອງຊາວບ້ານທຸກຄົນ. ສິ່ງທີ່ຂັດໃຈເລັກນ້ອຍກໍຄືວ່າ ເງິນບໍານານນັ້ນລຸງກິນ ບໍ່ຄ່ອຍແຊບ ເພາະຮູ້ສຶກເໝືອນກັບວ່າໄດ້ລ້າ, ບໍ່ໄດ້ເຮັດຫຍັງທັງໆທີ່ມັນໄດ້ເປັນເງິນງວດປຽບກັບເງິນປີ ແລະຫຼາຍປີຕອນລຸງຍັງໃສ່ເຄື່ອງແບບຄູຢູ່.

ລຸງຄູບຸ່ນມີຖານະການເປັນຢູ່ ພໍສົມມາສົມຄວນ ຮ່ວມກັບແມ່ເຈົ້າເຮືອນຊື່ປ້າເຫງົ້າ. ລູກທັງສາມ ຍິງສອງຊາຍໜຶ່ງ ກໍເປັນຝັ່ງເປັນຝາໄປແລ້ວ ມີຫຼານໆ ກາຍໂຫຼໄວ້ຈ່ອງຂ້າງ ຍາມເຫງົາ.

ຄືໄດ້ເວົ້າມາແລ້ວ, ໃນສາຍຕາຕົນເອງ ແລະສາຍຕາຊາວບ້ານ ລຸງຄູກໍຍັງເປັນຄູບຸ່ນຢູ່ຄືເກົ່າ. ສ່ວນຄູໜຸ່ມສອງຄົນມາປ່ຽນໃໝ່ນັ້ນຍັງຕ້ອງໄດ້ໃຊ້ເວລາເພື່ອການຍອມຮັບຈາກຄົນໃນບ້ານ. ໃນຖານະຄູອະມະຕະ, ລຸງຄູບຸ່ນຕ້ອງໄດ້ເຮັດໜ້າທີ່ເປັນສະໝອງ, ເປັນຫູ ເປັນຕາ ແລະເປັນຂາ ພາຊາວບ້ານຍ່າງ. ຄວາຍເຂົ້າສວນກິນເຄື່ອງປູກຢູ່ຈອກໃດແຈໃດ, ຜົວເມຍຜິດກັນເກົ້າຄູ່ສິບຄູ່, ຄົນລັກປາຕ້ອນ, ຄົນຖືກຜີເຂົ້າ ເຈົ້າສູນຢູ່ບ່ອນໃດ ລຸງຄູຕ້ອງໄດ້ໄປຊ່ວຍແກ້ ຊ່ວຍໃຫ້ຄໍາແນະນໍາ. ຄິດໄປຄິດມາ ລຸງຄູບຸ່ນຍິ້ມໃຫ້ຕົນເອງ, ບໍ່ເສຍແຮງນຸ່ງຜ້າເຫຼືອງກິນເຂົ້າບາດ ຈົນໄດ້ເປັນຮອດມະຫາທິກ, ມີຄວາມຮູ້ທາງທໍາ ທາງໂລກ ສິລະປະວັນນະຄະດີ, ຄໍາສູດໄຫວ້ ລວມທັງເວດມົນຄາຖາ ແກ້ເຄາະ ສະເດາະເຂັນ ແລະຕໍາລາຍາພື້ນເມືອງປິ່ນປົວເວລາຄົນເຈັບເປັນເອັນອຸ່ນ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ